ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ສະຖາບັນກິລາ-ກາຍຍະກຳ

ເລກທີ 154 /ສບກ

ນະຄອນຫຼວງວຽງຈັນ, ວັນທີ 27 ມີນາ 2023

# ແຈ້ງການເຂົ້າຮ່ວມປະມູນ

ເຖິງ: ບໍລິສັດ ຫຼື ຫ້າງຮ້ານ ທີ່ມີຄວາມສົນໃຈ ເຂົ້າຮ່ວມການປະມູນ

ກິດຈະການ: ຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ຫ້ອງການ, ອຸປະກອນສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ວຽກງານວິຊາສະເພາະ ປະຈຳປີ 2023 ຂອງສະຖາບັນກິລາ-ກາຍຍະກຳ.

- ອີງຕາມ ຂໍ້ຕົກລົງ ທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງສະຖາບັນກິລາ-ກາຍຍະກຳ ສະບັບເລກທີ 1171/ສສກ, ລົງວັນທີ 23 ມີນາ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຈັດຕັ້ງປະຕິບັດ ແລະ ຄຸ້ມຄອງຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ຫ້ອງການ, ອຸປະກອນສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ວຽກງານວິຊາສະເພາະ ປະຈຳປີ 2023 ສະຖາບັນກິລາ-ກາຍຍະກຳສະບັບເລກທີ 1126/ສສກ, ລົງວັນທີ 01 ມີນາ 2023;
- ອີງຕາມ ແຜນອະນຸມັດງົບປະມານ ປະຈຳປີ 2023 ຂອງສະຖາບັນກິລາ-ກາຍຍະກຳ ສະບັບເລກທີ 055/ສບກ, ລົງວັນທີ 09 ກຸມພາ 2023.

ສະຖາບັນກິລາ-ກາຍຍະກຳ ກະຊວງສຶກສາທິການ ແລະ ກິລາ ໄດ້ຮັບອະນຸມັດງົບປະມານຂອງລັດ ປີ 2023 ເພື່ອຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ຫ້ອງການ, ອຸປະກອນສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ວຽກງານວິຊາສະເພາະ ເຊິ່ງມີລາຍລະອຽດຕ່າງໆດັ່ງລຸ່ມນີ້ :

- ການປະມູນຈະໄດ້ດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.
- ບໍລິສັດທີ່ສົນໃຈເຂົ້າຮ່ວມ ສາມາດເຂົ້າມາຊື້ຊອງປະມູນໄດ້ທີ່ສະຖາບັນກິລາ-ກາຍຍະກຳ ຕາມເວລາລັດຖະການ ຫຼື ຕິດຕໍ່ເບີໂທ 020 59992689 ຄ່າຊອງເອກະສານປະມູນແມ່ນ 500.000 ກີບ/ຊອງ;
- ທຸກໆ ຊອງປະມູນຕ້ອງໄດ້ ມີຫນັງສືຄ້ຳປະກັນການປະມູນດ້ວຍກຽດ ຫລື ຫນັງສືຄ້ຳປະກັນການປະມູນຈາກທະນາຄານ ຢ່າງຫນ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເຫນີເຂົ້າປະມູນ.
- ພິທີເປີດຊອງປະມູນ ແມ່ນຈະໄດ້ຈັດຂຶ້ນ ໃນວັນທີ 05 ພຶດສະພາ 2023 ທີ່ຫ້ອງປະຊຸມສະຖາບັນກິລາ-ກາຍຍະກຳ ບ້ານ ສີເກີດ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ, ຖ້າຫາກບໍລິສັດໃດບໍ່ມາ ຫຼື ມາຊ້າເກີນ 45 ນາທີ ຖືວ່າສະລະສິດ ໂດຍບໍ່ມີເງື່ອນໄຂຕໍ່ວ່າເດັດຂາດ.

ສແກນດ້ວຍ CamScanner

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດ ຫຼື ຫ້າງຮ້ານ ທີ່ມີຄວາມສົນໃຈ ຈະເຂົ້າຮ່ວມການປະມູນ ຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ຫ້ອງການ, ອຸປະກອນສື່ການຮຽນ-ການສອນ ແລະ ອຸປະກອນຮັບໃຊ້ວຽກງານວິຊາສະເພາະ ປະຈຳປີ 2023 ຂອງສະຖາບັນກິລາ-ກາຍຍະກຳ.

(ລາຍລະອຽດໄດ້ມີເງື່ອນໄຂຂອງບໍລິສັດທີ່ຈະເຂົ້າຮ່ວມການປະມູນຄັດຕິດມາພ້ອມນີ້)

**ເຈົ້າຂອງໂຄງການ**

ສະຖາບັນກິລາ-ກາຍຍະກຳ

ສຸລິວັນ ເຊີນວິໄລ

สแกนด้วย CamScanner